# ເງິນຊ່ວຍເຫຼືອຊົດເຊີຍພະນັກງານ ແລະ ໂຄວິດ-19

ເງິນຊ່ວຍເຫຼືອຊົດເຊີຍພະນັກງານແມ່ນຖືກກຳນົດມາເພື່ອຈ່າຍເງິນຊ່ວຍຄ່າປິ່ນປົວທາງການແພດທີ່ທ່ານຕ້ອງການເພື່ອພັກຟື້ນຈາກອາການບາດເຈັບ ຫຼື ເຈັບປ່ວຍທີ່ກ່ຽວຂ້ອງກັບວຽກຂອງທ່ານເຊັ່ນ: ການຕິດເຊື້ອໂຄວິດ-19 ຈາກວຽກທີ່ເຮັດ. ພວກມັນຈະມາແທນຄ່າຈ້າງບາງສ່ວນທີ່ທ່ານສູນເສຍໄປໃນຂະນະທີ່ທ່ານກຳລັງພັກຟື້ນ ແລະ ຊ່ວຍທ່ານກັບໄປເຮັດວຽກ. ເງິນຊ່ວຍເຫຼືອເຫຼົ່ານີ້ມີໃຫ້ແກ່ພະນັກງານໂດຍບໍ່ກ່ຽວຂ້ອງກັບສະຖານະການເຂົ້າເມືອງ.

ຖ້າຫາກທ່ານເຊື່ອວ່າທ່ານໄດ້ຕິດເຊື້ອໂຄວິດ-19 ຈາກວຽກທີ່ທ່ານເຮັດ, ທ່ານຄວນ**ແຈ້ງນາຍຈ້າງຂອງທ່ານ**ທັນທີ ແລະ **ຍື່ນການຂໍຮັບ**ເງິນສຳລັບເງິນຊ່ວຍເຫຼືອຊົດເຊີຍພະນັກງານ.

**ຖ້າຫາກອາການເຈັບປ່ວຍຂອງທ່ານແມ່ນເຫດສຸກເສີນ, ໂທຫາເບີ 911** ຫຼື ໄປທີ່ຫ້ອງສຸກເສີນທັນທີ. ບອກພະນັກງານແພດວ່າການຕິດເຊື້ອໂຄວິດ-19 ຂອງທ່ານແມ່ນກ່ຽວຂ້ອງກັບວຽກທີ່ທ່ານເຮັດ. ຖ້າຫາກທ່ານສາມາດເຮັດມັນໄດ້ຢ່າງປອດໄພ, **ຕິດຕໍ່ຫານາຍຈ້າງຂອງທ່ານ** ສຳລັບຄຳແນະນຳເພີ່ມເຕີມ.

## ວິທີຍື່ນການຂໍຮັບເງິນຂອງທ່ານ

- ບອກນາຍຈ້າງຂອງທ່ານວ່າທ່ານຕ້ອງການຍື່ນຂໍເງິນຊ່ວຍເຫຼືອຊົດເຊີຍພະນັກງານ ຫຼື ຕື່ມແບບຟອມ
- ນາຍຈ້າງຂອງທ່ານຈະຕື່ມສ່ວນຂອງພວກເຂົາ ແລະ ສົ່ງມັນໄປຫາບໍລິສັດປະກັນໄພ.
- ໃຫ້ແນ່ໃຈວ່າໄດ້ຂໍສຳເນົາຈາກນາຍຈ້າງຂອງທ່ານເພື່ອເປັນຫຼັກຖານ.
- ພາຍໃນໜຶ່ງວັນຂອງການຕື່ມແບບຟອມການຂໍຮັບເງິນ, ນາຍຈ້າງຂອງທ່ານຕ້ອງອະນຸມັດການປິ່ນປົວທາງການແພດທີ່ເໝາະສົມ. ໃນຂະນະທີ່ນາຍຈ້າງຂອງທ່ານກຳລັງຕັດສິນໃຈວ່າຈະຕອບຮັບ ຫຼື ປະຕິເສດການຂໍເງິນຂອງທ່ານ, ທ່ານອາດຈະໄດ້ຮັບເງິນສຳລັບການປິ່ນປົວທາງການແພດສູງສຸດເຖິງ $10,000.

## ແມ່ນຫຍັງຈະເກີດຂຶ້ນຕໍ່ໄປ?

→ ຖ້າຫາກທ່ານບໍ່ໄດ້ຮັບຈົດໝາຍກ່ຽວກັບສະຖານະການຂໍຮັບເງິນຂອງທ່ານພາຍໃນ 14 ວັນ, ໂທຫາບໍລິສັດປະກັນໄພຂອງທ່ານສຳລັບຂໍ້ມູນເພີ່ມເຕີມ.

→ ຖ້າຫາກນາຍຈ້າງຂອງທ່ານບໍ່ປະຕິເສດການຂໍຮັບເງິນຂອງທ່ານພາຍໃນ 90 ວັນ, ການບາດເຈັບຂອງທ່ານແມ່ນຖືວ່າໄດ້ຮັບການຄຸ້ມຄອງແລ້ວ.

## ຍັງມີຄຳຖາມເພີ່ມເຕີມບໍ?

ທ່ານສາມາດຕິດຕໍ່ຫາພະແນກເງິນຊົດເຊີຍພະນັກງານ, ຖ້າຫາກທ່ານມີຄຳຖາມ ຫຼື ໂທ **1-800-736-7401** ສຳລັບຂໍ້ມູນທີ່ໄດ້ບັນທຶກໄວ້.

## ຮຽນຮູ້ເພີ່ມເຕີມທີ່:
## dir.ca.gov/dwc/injuredworker.htm

SAFER AT WORK
CALIFORNIA ALL
saferatwork.ca.gov